ທຄຕລ BCEL

**ທະນາຄານການຄ້າຕ່າງປະເທດລາວ**

**BANQUE POUR LE COMMERCE EXTERIEUR LAO**

ທັນສະໄໝ ວ່ອງໄວ ໝັ້ນໃຈ

*Modern Quick Reliable*

ສຳນັກງານໃຫຍ່

ເລກທີ 012 /ທຄຕລ ຂທ7

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2017

ຮຽນ: ບັນດາທ່ານ ຜູ້ຖືຮຸ້ນ, ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ເລື່ອງ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຮັບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ.

- ອີງຕາມໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ສະບັບເລກທີ 009/ສຄຄຊ, ລົງວັນທີ 17 ກໍລະກົດ 2017.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງມາຍັງທ່ານ ຜູ້ຖືຮຸ້ນ ທຄຕລ, ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊາບ ທຄຕລ ໄດ້ຮັບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ດັ່ງລາຍລະອຽດລຸ່ມນີ້:

- ອອກຮຸ້ນປະເພດ: ຮຸ້ນສາມັນ
- ມູນຄ່າທັງໝົດ: 360.000.060.000 ກີບ
- ຈຳນວນຮຸ້ນທີ່ອອກ: 71.145.700 ຮຸ້ນ
- ມູນຄ່າກຳນົດ: 5.000 ກີບ/ຮຸ້ນ
- ລາຄາຂາຍໃຫ້ແກ່ຜູ້ຖືຮຸ້ນເດີມ 5.050 ກີບ/ຮຸ້ນ
- ລາຄາຂາຍໃຫ້ແກ່ມວນຊົນ 5.300 ກີບ/ຮຸ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC

**ພູຂົງ ຈັນທະຈັກ**

ເລກທີ 01 ຖະໜົນປາງຄຳ, ຕູ້ ປນ. 2925 ນະຄອນຫຼວງວຽງຈັນ, ສ ປ ປ ລາວ Telex: 4301, 4332 BCE VTE LS;

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----====000====-----

Lao
ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 009 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2017

# ໃບອະນຸຍາດ

## ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ ລົງວັນທີ 12 ມິຖຸນາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ ລົງວັນທີ 17 ທັນວາ 2013.

**ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອະນຸຍາດ:**

**ມາດຕາ 1:** ໃຫ້ບໍລິສັດ (ຊື່ເປັນພາສາລາວ): ..................**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**..........................

(ຊື່ເປັນພາສາສາກົນ): ............ **BANQUE POUR LE COMMERCE EXTERIEUR** ......................

ທະບຽນວິສາຫະກິດເລກທີ: ...............................**167/ຈທວ**.......................................................

ທຶນຈົດທະບຽນ: .......................**682.888.000.000**..........................ກີບ

ທີ່ຕັ້ງສຳນັກງານ: ບ້ານ...........**ຊຽງຍືນ**..........., ເມືອງ .........................**ຈັນທະບູລີ**..........................,

ແຂວງ................**ນະຄອນຫຼວງວຽງຈັນ**.............., ຖະໜົນ ..............**ປາງຄຳ**..................................

ອອກຮຸ້ນປະເພດ: ..............**ຮຸ້ນສາມັນ**............. ລະຫັດ: L A - 3 - 0 0 0 0 1 - 0 0 0 - 6

ຈຳນວນຮຸ້ນທີ່ອອກ: .....................**71.145.700**..........................ຮຸ້ນ

ມູນຄ່າກຳນົດ: ............................**5.000**..................................ກີບ/ຮຸ້ນ

ລາຄາຂາຍໃຫ້ແກ່ຜູ້ຖືຮຸ້ນເດີມ: ......... **5.050**..................................ກີບ/ຮຸ້ນ

ລາຄາຂາຍໃຫ້ແກ່ມວນຊົນ: ......... **5.300**..................................ກີບ/ຮຸ້ນ

ມູນຄ່າທັງໝົດ: .......................**360.000.060.000**.......................ກີບ

**ມາດຕາ 2:** ພາຍຫຼັງອອກຈຳໜ່າຍຮຸ້ນແລ້ວ **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ຕ້ອງປະຕິບັດຕາມ ລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 3:** ໃບອະນຸຍາດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານ ຄຄຊ

**ສາຍສະໝອນ ຈັນທະຈັກ**

**ໝາຍເຫດ:**

1. ໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ສະບັບນີ້ ມີຜົນນຳໃຊ້ສະເພາະການອອກຈຳໜ່າຍຮຸ້ນຄັ້ງນີ້ ເທົ່ານັ້ນ.
2. ບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ ໃບອະນຸຍາດສະບັບນີ້ໄດ້.
3. ພາຍຫຼັງບໍລິສັດໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ຕ້ອງປະຕິບັດຕາມລະບຽບ ແລະ ຂັ້ນຕອນ ການອອກຈຳໜ່າຍຮຸ້ນທີ່ໄດ້ກຳນົດໄວ້.
4. ທຸກການປັບປຸງ, ປ່ຽນແປງ ຂໍ້ມູນທີ່ໄດ້ກຳນົດໄວ້ໃນໃບອະນຸຍາດສະບັບນີ້ ຕ້ອງໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ.

No: 939
Date: 17 JUL 2017
BCEL

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ — ເລກທີ 0168/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2017

## ໜັງສືແຈ້ງຕອບ

**ເຖິງ:** ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ,

**ເລື່ອງ: ອະນຸມັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.**

- ອີງຕາມ ລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນ ສະບັບເລກທີ 018/ຄຄຊ ລົງວັນທີ 22 ກໍລະກົດ 2015;
- ອີງຕາມ ໜັງສືສະເໜີອອກຈຳໜ່າຍຮຸ້ນ ສະບັບເລກທີ 170/ທຄຕລ ລົງວັນທີ 11 ເມສາ 2017;
- ອີງຕາມ ທິດຊີ້ນຳຂອງທ່ານ ປະທານ ຄຄຊ ລົງ ວັນທີ 07 ກໍລະກົດ 2017;

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍແຈ້ງມາຍັງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຊາບວ່າ: ຜ່ານການຄົ້ນຄວ້າເອກະສານປະກອບຄຳຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ (PO ແລະ RO) ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ສຄຄຊ ເຫັນດີອະນຸມັດ ໃຫ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ (PO ແລະ RO) ຕາມການສະເໜີຂອງ ທຄຕລ.

ສະນັ້ນ, ເພື່ອປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ແລະ ເຮັດໃຫ້ມວນຊົນໄດ້ຮັບຊາບຂໍ້ມູນຂ່າວສານກ່ຽວກັບການອອກຈຳໜ່າຍຮຸ້ນໃນຄັ້ງນີ້ ສຄຄຊ ສະເໜີໃຫ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈັດຕັ້ງການໂຄສະນາ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບການໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນດັ່ງກ່າວຜ່ານພາຫະນະສື່ມວນຊົນຢ່າງໜ້ອຍ ຫ້າວັນລັດຖະການ ຕໍ່ເນື່ອງ ພ້ອມທັງເຜີຍແຜ່ໜັງສືຊວນຊື້ສະບັບສົມບູນ ຜ່ານທາງລະບົບເປີດເຜີຍຂໍ້ມູນຕາມການກຳນົດຂອງ ສຄຄຊ ເປັນໄລຍະເວລາຢ່າງໜ້ອຍ ຫ້າວັນຕໍ່ເນື່ອງ ກ່ອນວັນເປີດການຈອງຊື້ຮຸ້ນ (ໃບອະນຸຍາດ ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າສຳນັກງານ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

**ສາຍສະໝອນ ຈັນທະຈັກ**

<u>ສຳເນົາສົ່ງ:</u>

- ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ: 1 ສະບັບ ເພື່ອຊາບ ແລະ ເປັນບ່ອນອີງ.